ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 475 /ລບ

ນະຄອນຫຼວງວຽງຈັນ, ວັນທີ 16.07.2021

# ດຳລັດ
## ວ່າດ້ວຍ ການອອກວີຊາ ແລະ ການກຳນົດເວລາພັກເຊົາ ຢູ່ ສປປ ລາວ ໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ສະບັບເລກທີ 59/ສພຊ, ລົງວັນທີ 26 ທັນວາ 2014;
- ອີງຕາມ ກົດໝາຍວ່າດ້ວຍສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ສະບັບເລກທີ 58/ສພຊ, ລົງວັນທີ 11 ທັນວາ 2018;
- ອີງຕາມ ໜັງສືສະເໜີ ຂອງກະຊວງການຕ່າງປະເທດ ສະບັບເລກທີ 1085/ຕປທ.ພລຕ3, ລົງວັນທີ 02 ເມສາ 2021.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານອອກວີຊາ ແລະ ກຳນົດເວລາພັກເຊົາ ຢູ່ ສປປ ລາວ ໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ ເພື່ອໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີຄວາມເປັນເອກະພາບ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ອຳນວຍຄວາມສະດວກ ໃນການ ເຂົ້າ-ອອກ ແລະ ພັກເຊົາ ຢູ່ ສປປ ລາວ ໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ ທັງຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 ການອອກວິຊາ ແລະ ການກຳນົດເວລາພັກເຊົາ ຢູ່ ສປປ ລາວ ໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ**

ການອອກວິຊາໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ ແມ່ນການອະນຸຍາດໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ ແລະ ສະມາຊິກຄອບຄົວຂອງເຂົາເຈົ້າ ລວມທັງ ສະມາຊິກຄອບຄົວຂອງພົນລະເມືອງລາວ ທີ່ຖືສັນຊາດຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ເທື່ອໜຶ່ງ ຫຼື ຫຼາຍເທື່ອ.

ການກຳນົດເວລາພັກເຊົາຢູ່ ສປປ ລາວ ໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ ແມ່ນການອະນຸຍາດໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ ແລະ ສະມາຊິກຄອບຄົວຂອງເຂົາເຈົ້າ ລວມທັງ ສະມາຊິກຄອບຄົວຂອງພົນລະເມືອງລາວ ທີ່ຖືສັນຊາດຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ພັກເຊົາ ຕາມປະເພດວິຊາ ໄລຍະສັ້ນ ຫຼື ໄລຍະຍາວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄົນເຊື້ອຊາດລາວຢູ່ຕ່າງປະເທດ** ໝາຍເຖິງ ຜູ້ທີ່ເກີດຈາກພໍ່ ແລະ ແມ່ ຫຼື ພໍ່ ຫຼື ແມ່ ເປັນພົນລະເມືອງລາວ ຫຼື ມີສັນຊາດລາວໂດຍກຳເນີດ ທີ່ດຳລົງຊີວິດຢ່າງຖາວອນ ຢູ່ຕ່າງປະເທດ ຊຶ່ງພວກກ່ຽວໄດ້ເສຍສັນຊາດລາວແລ້ວ ລວມທັງລູກ ແລະ ຫຼານຂອງເຂົາເຈົ້າ;
2. **ສະມາຊິກຄອບຄົວ** ໝາຍເຖິງ ຜົວ ຫຼື ເມຍ ແລະ ລູກ ຂອງ ຄົນເຊື້ອຊາດລາວຢູ່ຕ່າງປະເທດ;
3. **ສະມາຊິກຄອບຄົວຂອງພົນລະເມືອງລາວ ທີ່ຖືສັນຊາດຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ** ໝາຍເຖິງ ຜົວ ຫຼື ເມຍ ແລະ ລູກ ຂອງ ພົນລະເມືອງລາວ ທີ່ດຳລົງຊີວິດຢ່າງຖາວອນຢູ່ຕ່າງປະເທດ;
4. **ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ** ໝາຍເຖິງ ສຳນັກງານຜູ້ຕາງໜ້າການທູດ, ສຳນັກງານຜູ້ຕາງໜ້າກົງສຸນ ແລະ ສຳນັກງານຜູ້ຕາງໜ້າ ປະຈຳ ອົງການຈັດຕັ້ງສາກົນ ແຫ່ງ ສປປ ລາວ ຢູ່ຕ່າງປະເທດ;
5. **ເຈົ້າໜ້າທີ່ກົງສຸນ** ໝາຍເຖິງ ພະນັກງານ-ລັດຖະກອນ ທີ່ສັງກັດ ຢູ່ ກົມກົງສຸນ, ກະຊວງການຕ່າງປະເທດ ແລະ ພະນັກງານ ຂອງສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ທີ່ເຮັດວຽກກົງສຸນ.

**ມາດຕາ 4 ຫຼັກການກ່ຽວກັບການອອກວິຊາ ແລະ ການກຳນົດເວລາພັກເຊົາ**

ການອອກວິຊາ ແລະ ການກຳນົດເວລາພັກເຊົາ ຢູ່ ສປປ ລາວ ໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດນະໂຍບາຍການຕ່າງປະເທດ ຂອງ ສປປ ລາວ;
2. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
3. ຄຸ້ມຄອງຢ່າງລວມສູນ, ເປັນເອກະພາບ, ຍຸຕິທຳ, ໂປ່ງໃສ, ວ່ອງໄວ ແລະ ສາມາດກວດສອບໄດ້;
4. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ມາດຕາ 5 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານອອກວິຊາ ແລະ ກຳນົດເວລາພັກເຊົາ ຢູ່ ສປປ ລາວ ໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ.

## ໝວດທີ 2
## ເງື່ອນໄຂການອອກວີຊາ ແລະ ອາຍຸນຳໃຊ້ວີຊາ

**ມາດຕາ 6 ເງື່ອນໄຂການອອກວີຊາ ເຂົ້າ-ອອກ ສປປ ລາວ**

ເງື່ອນໄຂການອອກວີຊາ ເຂົ້າ-ອອກ ສປປ ລາວ ມີ ດັ່ງນີ້:

1. ໜັງສືຜ່ານແດນ ຫຼື ເອກະສານເດີນທາງທີ່ໃຊ້ແທນໜັງສືຜ່ານແດນ ທີ່ມີອາຍຸນຳໃຊ້ ໜຶ່ງຮ້ອຍແປດສິບວັນ ຂຶ້ນໄປ;
2. ໜັງສືຢັ້ງຢືນ ສະຖານະພາບຂອງບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງດຳລັດສະບັບນີ້;
3. ຈຸດປະສົງເດີນທາງເຂົ້າມາ ສປປ ລາວ ເພື່ອຢ້ຽມຢາມ, ທ່ອງທ່ຽວ ຫຼື ເຫດຜົນສ່ວນຕົວອື່ນ ທີ່ບໍ່ແມ່ນການປະກອບອາຊີບ ເພື່ອສະແຫວງຫາຜົນປະໂຫຍດ;
4. ບໍ່ແມ່ນບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ແລະ ມາດຕາ 13 ຂອງກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ.

**ມາດຕາ 7 ອາຍຸນຳໃຊ້ວີຊາ**

ວີຊາໄລຍະສັ້ນ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ເທື່ອໜຶ່ງ ຊຶ່ງອອກໃຫ້ໂດຍສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ມີອາຍຸນຳໃຊ້ ບໍ່ເກີນ ຫົກສິບ ວັນ.

ວີຊາໄລຍະຍາວ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອ ມີອາຍຸນຳໃຊ້ບໍ່ເກີນ ຊາວສີ່ ເດືອນ ແລະ ອາຍຸນຳໃຊ້ວີຊາ ເຂົ້າ-ອອກ ສປປ ລາວ ຫຼາຍເທື່ອນັ້ນ ຕ້ອງສັ້ນກວ່າອາຍຸນຳໃຊ້ຂອງໜັງສືຜ່ານແດນ ຫຼື ເອກະສານເດີນທາງທີ່ໃຊ້ແທນໜັງສືຜ່ານແດນ.

## ໝວດທີ 3
## ການອອກ, ການລຶບລ້າງ ວີຊາ ແລະ ການປະຕິເສດ ການເຂົ້າ-ອອກ ສປປ ລາວ

**ມາດຕາ 8 ເອກະສານປະກອບການຂໍວີຊາ ເຂົ້າ-ອອກ ສປປ ລາວ**

ເອກະສານປະກອບການຂໍວີຊາ ໄລຍະສັ້ນ ທີ່ສາມາດເດີນທາງເຂົ້າ-ອອກ ສປປ ລາວ ໄດ້ເທື່ອໜຶ່ງ ຫຼື ວີຊາໄລຍະຍາວ ທີ່ສາມາດເດີນທາງເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອ ໃຫ້ຍື່ນຕໍ່ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ.

ເອກະສານປະກອບການຂໍວີຊາເຂົ້າ-ອອກ ສປປ ລາວ ມີ ດັ່ງນີ້:

1. ຄຳຮ້ອງຂໍວີຊາ ຕາມແບບພິມຂອງກະຊວງການຕ່າງປະເທດ;
2. ໜັງສືຜ່ານແດນ ຫຼື ເອກະສານເດີນທາງທີ່ໃຊ້ແທນໜັງສືຜ່ານແດນ;
3. ເອກະສານອື່ນ ທີ່ກ່ຽວຂ້ອງ ຕາມການກຳນົດຂອງກະຊວງການຕ່າງປະເທດ.

**ມາດຕາ 9 ຂັ້ນຕອນການອອກວີຊາ ເຂົ້າ-ອອກ ສປປ ລາວ**

ພາຍຫຼັງສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ໄດ້ຮັບເອກະສານປະກອບການຂໍວີຊາ ເຂົ້າ-ອອກ ສປປ ລາວ ຕາມທີ່ໄດ້ກຳນົດໃນມາດຕາ 8 ຂອງດຳລັດສະບັບນີ້ ໃຫ້ພິຈາລະນາຕາມແຕ່ລະກໍລະນີ ດັ່ງນີ້:

1. ສຳລັບການຂໍວີຊາໄລຍະສັ້ນ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ເທື່ອໜຶ່ງ ໃຫ້ພິຈາລະນາອອກວີຊາ ຕາມລະບຽບການ.

2. ສຳລັບການຂໍວີຊາໄລຍະຍາວ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອ ໃຫ້ພິຈາລະນາແລ້ວສົ່ງເອກະສານປະກອບການຂໍວີຊາ ເຂົ້າ-ອອກ ສປປ ລາວ ໃຫ້ກະຊວງການຕ່າງປະເທດ.

ພາຍຫຼັງກະຊວງການຕ່າງປະເທດ ໄດ້ຮັບເອກະສານປະກອບການຂໍວີຊາໄລຍະຍາວ ທີ່ສາມາດເດີນທາງເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອ ໃຫ້ພິຈາລະນາ ແລ້ວແຈ້ງຕອບໄປຍັງສຳນັກງານຜູ້ຕາງໜ້າແຫ່ງ ສປປ ລາວປະຈຳຢູ່ຕ່າງປະເທດ ທີ່ກ່ຽວຂ້ອງ.

ໃນກໍລະນີການຂໍວີຊາໄລຍະສັ້ນ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ເທື່ອໜຶ່ງ ຢູ່ ດ່ານສາກົນໃຫ້ຜູ້ຮ້ອງຂໍຍື່ນເອກະສານປະກອບການຂໍວີຊາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດຳລັດສະບັບນີ້ ຕໍ່ໜ່ວຍງານວີຊາກັບດ່ານສາກົນທີ່ກ່ຽວຂ້ອງ.

ສຳລັບຜູ້ທີ່ໄດ້ພັກເຊົາຊົ່ວຄາວ ຢູ່ ສປປ ລາວ ຫາກມີຈຸດປະສົງຮ້ອງຂໍວີຊາໄລຍະຍາວ ທີ່ສາມາດເດີນທາງເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອ ສາມາດຍື່ນເອກະສານປະກອບການຂໍວີຊາປະເພດດັ່ງກ່າວ ຕໍ່ກະຊວງການຕ່າງປະເທດ.

ລາຍລະອຽດກ່ຽວກັບຂັ້ນຕອນການອອກ ວີຊາໄລຍະສັ້ນ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ເທື່ອໜຶ່ງ ແລະ ວີຊາໄລຍະຍາວ ທີ່ສາມາດເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 10 ຂັ້ນຕອນການສະເໜີຂໍອອກ ວີຊາໄລຍະຍາວ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອຄືນໃໝ່**

ໃນກໍລະນີ ໜັງສືຜ່ານແດນ ຫຼື ເອກະສານເດີນທາງທີ່ໃຊ້ແທນໜັງສືຜ່ານແດນ ຂອງບຸກຄົນທີ່ໄດ້ຮັບວີຊາໄລຍະຍາວ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອ ຫາກເສຍ, ເສຍຫາຍ ຫຼື ຕ້ອງການດັດແກ້ ຫຼື ປັບປຸງຂໍ້ມູນ ໃຫ້ປະກອບເອກະສານຂໍວີຊາຄືນໃໝ່ ດັ່ງນີ້:

1. ໜັງສືຢັ້ງຢືນການເສຍຫາຍ ຂອງໜັງສືຜ່ານແດນ ຫຼື ເອກະສານເດີນທາງທີ່ໃຊ້ແທນໜັງສືຜ່ານແດນ;
2. ສຳເນົາໜັງສືຢັ້ງຢືນການດັດແກ້, ປັບປຸງຂໍ້ມູນ ຂອງໜັງສືຜ່ານແດນ ຫຼື ເອກະສານເດີນທາງທີ່ໃຊ້ແທນໜັງສືຜ່ານແດນ;
3. ເອກະສານປະກອບການຂໍວີຊາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດຳລັດສະບັບນີ້.

ສຳລັບຜູ້ທີ່ຢູ່ຕ່າງປະເທດ ໃຫ້ຍື່ນຂໍວີຊາໄລຍະຍາວ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອ ຄືນໃໝ່ ຕໍ່ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ.

ສຳລັບຜູ້ທີ່ໄດ້ພັກເຊົາຊົ່ວຄາວ ຢູ່ ສປປ ລາວ ໃຫ້ຍື່ນຂໍວີຊາໄລຍະຍາວ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອ ຄືນໃໝ່ ຕໍ່ກະຊວງການຕ່າງປະເທດ.

ການພິຈາລະນາອອກວີຊາໄລຍະຍາວ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອ ຄືນໃໝ່ ໃຫ້ປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ ໃນມາດຕາ 9 ຂອງດຳລັດສະບັບນີ້.

**ມາດຕາ 11 ການລຶບລ້າງວີຊາໄລຍະຍາວ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອ**

ກະຊວງການຕ່າງປະເທດ ມີສິດລຶບລ້າງວີຊາໄລຍະຍາວ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອ ທີ່ຕົນ ແລະ ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ເປັນຜູ້ອອກໃຫ້ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ມີສິດລຶບລ້າງວີຊາໄລຍະຍາວ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອ ທີ່ຕົນເປັນຜູ້ອອກ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 12 ການປະຕິເສດການເຂົ້າ-ອອກ ສປປ ລາວ**

ອົງການລັດທີ່ກ່ຽວຂ້ອງ ມີສິດປະຕິເສດການເຂົ້າ-ອອກ ສປປ ລາວ ສຳລັບຜູ້ທີ່ໄດ້ຮັບວີຊາ ເຂົ້າ-ອອກ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 13 ການແຈ້ງລຶບລ້າງວີຊາ ແລະ ການປະຕິເສດ ເຂົ້າ-ອອກ ສປປ ລາວ**

ອົງການທີ່ໄດ້ກຳນົດໄວ້ໃນ ມາດຕາ 11 ຂອງດຳລັດສະບັບນີ້ ເປັນຜູ້ອອກແຈ້ງການລຶບລ້າງວີຊາ ເຂົ້າ-ອອກ ສປປ ລາວ ພ້ອມທັງແຈ້ງໃຫ້ກະຊວງປ້ອງກັນຄວາມສະຫງົບ ແລະ ບຸກຄົນທີ່ຖືກລຶບລ້າງວີຊາ ເຂົ້າ-ອອກ ສປປ ລາວ ຊາບ.

ບຸກຄົນທີ່ຖືກລຶບລ້າງວີຊາ ເຂົ້າ-ອອກ ສປປ ລາວ ບໍ່ມີສິດຮຽກຄ່າບໍລິການວີຊາໃນການອອກວີຊາ ເຂົ້າ-ອອກ ສປປ ລາວ ຄືນ.

## ໝວດທີ 4
## ກຳນົດເວລາພັກເຊົາ ແລະ ການຕໍ່ເວລາພັກເຊົາ ຢູ່ ສປປ ລາວ

**ມາດຕາ 14 ກຳນົດເວລາພັກເຊົາ ຢູ່ ສປປ ລາວ**

ຜູ້ທີ່ໄດ້ຮັບວີຊາໄລຍະສັ້ນ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ເທື່ອໜຶ່ງ ຢູ່ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ຫຼື ຢູ່ດ່ານສາກົນ ບ່ອນທີ່ມີໜ່ວຍງານວີຊາກັບດ່ານ ຈະໄດ້ຮັບອະນຸຍາດພັກເຊົາ ຢູ່ ສປປ ລາວ ພາຍໃນກຳນົດເວລາ ເກົ້າສິບ ວັນ ແລະ ສາມາດສະເໜີຂໍຕໍ່ເວລາພັກເຊົາໄດ້ຕື່ມອີກ ໜຶ່ງຄັ້ງ ໃນກຳນົດເວລາບໍ່ເກີນ ເກົ້າສິບ ວັນ.

ຜູ້ທີ່ໄດ້ຮັບວີຊາໄລຍະຍາວ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ຫຼາຍເທື່ອ ຕາມທີ່ໄດ້ກຳນົດໄວ້ ໃນວັກສອງ ຂອງ ມາດຕາ 7 ຂອງດຳລັດສະບັບນີ້ ໃນເວລາເດີນທາງເຂົ້າມາ ສປປ ລາວ ຈະໄດ້ຮັບກຳນົດເວລາພັກເຊົາ ບໍ່ເກີນ ເກົ້າສິບ ວັນ ຕໍ່ຄັ້ງ.

ໃນກໍລະນີຕ້ອງການພັກເຊົາເກີນ ເກົ້າສິບ ວັນ ຕ້ອງມີ ພົນລະເມືອງລາວ, ນິຕິບຸກຄົນ ແລະ ການຈັດຕັ້ງ ຂອງ ສປປ ລາວ ຮັບປະກັນ ຈຶ່ງຈະໄດ້ຮັບການຕໍ່ເວລາພັກເຊົາຕື່ມອີກໄດ້ ສອງ ຄັ້ງ ແຕ່ລະຄັ້ງ ບໍ່ເກີນ ເກົ້າສິບ ວັນ.

**ມາດຕາ 15 ການຕໍ່ເວລາພັກເຊົາ ຢູ່ ສປປ ລາວ**

ການຕໍ່ເວລາພັກເຊົາ ຢູ່ ສປປ ລາວ ຂອງຜູ້ທີ່ໄດ້ຮັບວີຊາ ເຂົ້າ-ອອກ ສປປ ລາວ ໃຫ້ຍື່ນຄຳຮ້ອງ ຕໍ່ ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ກະຊວງປ້ອງກັນຄວາມສະຫງົບ ຫຼື ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ ກ່ອນຈະໝົດກຳນົດເວລາພັກເຊົາ ສາມ ວັນ.

ສຳລັບເອກະສານປະກອບການຕໍ່ເວລາພັກເຊົາຢູ່ ສປປ ລາວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 5
## ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 16 ຄ່າທຳນຽມ**

ຜູ້ທີ່ໄດ້ຮັບວິຊາ ເຂົ້າ-ອອກ ສປປ ລາວ ຢູ່ ກະຊວງການຕ່າງປະເທດ ແລະ ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ໄດ້ຮັບການຍົກເວັ້ນຄ່າທຳນຽມ ວິຊາ ແລະ ການຕໍ່ເວລາພັກເຊົາ. ສຳລັບຄ່າທຳນຽມ ວິຊາ ແລະ ການຕໍ່ເວລາພັກເຊົາ ຂອງບຸກຄົນທີ່ໄດ້ຮັບວິຊາໄລຍະສັ້ນ ທີ່ສາມາດເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ເທື່ອໜຶ່ງ ຢູ່ ດ່ານສາກົນນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 17 ຄ່າບໍລິການ**

ຄ່າບໍລິການ ໃນການອອກວິຊາ ແລະ ຕໍ່ເວລາພັກເຊົາ ຢູ່ ສປປ ລາວ ໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ, ສະມາຊິກຄອບຄົວຂອງເຂົາເຈົ້າ ລວມທັງສະມາຊິກຄອບຄົວຂອງພົນລະເມືອງລາວ ທີ່ຖືສັນຊາດຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ໃຫ້ປະຕິບັດຕາມລັດຖະບັນຍັດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ ໃນແຕ່ລະໄລຍະ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 18 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ ແລະ ໜ້າທີ່ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ໝູ່ເພື່ອນ;
2. ນຳໃຊ້ສິດ ແລະ ໜ້າທີ່ ເກີນຂອບເຂດໃນການອອກວິຊາ ແລະ ກຳນົດເວລາພັກເຊົາຢູ່ ສປປ ລາວ;
3. ກົດໜ່ວງ, ຖ່ວງດຶງ ແລະ ແກ່ຍາວຂັ້ນຕອນການພິຈາລະນາອອກວິຊາ ແລະ ກຳນົດເວລາພັກເຊົາຢູ່ ສປປ ລາວ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 19 ຂໍ້ຫ້າມສຳລັບຜູ້ທີ່ໄດ້ຮັບ ວິຊາ ແລະ ກຳນົດເວລາພັກເຊົາ**

ຫ້າມຜູ້ທີ່ໄດ້ຮັບວິຊາ ແລະ ກຳນົດເວລາພັກເຊົາຢູ່ ສປປ ລາວ ມີ ພຶດຕິກຳ ດັ່ງນີ້:

1. ພັກເຊົາບໍ່ຖືກຕ້ອງ ຫຼື ຢູ່ເກີນກຳນົດເວລາພັກເຊົາ;
2. ໃຫ້ຜົນປະໂຫຍດທີ່ບໍ່ຖືກຕ້ອງແກ່ເຈົ້າໜ້າທີ່;
3. ເຄື່ອນໄຫວວຽກງານໃດໜຶ່ງ ຢູ່ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດ;
4. ບໍ່ເຄົາລົບວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດລາວ;
5. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມໝັ້ນຄົງຂອງຊາດ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 20 ການຈັດຕັ້ງປະຕິບັດ**

ກະຊວງການຕ່າງປະເທດ ເປັນເຈົ້າການປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ ໃນການແນະນຳ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ພັນຄຳ ວິພາວັນ